www.maginternational.org

ອົງການເກັບກູ້ລະເບີດ ແມັກ ແມ່ນອົງການຊ່ວຍເຫຼືອທາງດ້ານມະນຸດສະທຳ ໃນການກວດກູ້ສິ່ງທີ່ຄົງຄ້າງຈາກສົງຄາມ ເພື່ອສ້າງຜົນປະໂຫຍດໃຫ້ກັບຊຸມຊົນໃນທົ່ວໂລກ. ອົງການເກັບກູ້ລະເບີດ ແມັກ ໄດ້ຮັບລາງວັນໂນເບວທາງດ້ານສັນຕິພາບໂລກ ໃນປີ 1997. ພວກເຮົາໄດ້ດຳເນີນການປະຕິບັດງານ ແລະ ຫາວິທີທາງຊ່ວຍໃນຂະບວນການສ້າງສັນຕິພາບ ແລະ ຄວາມໝັ້ນຄົງ ໃນບັນດາປະເທດທີ່ໄດ້ຮັບຜົນກະທົບຈາກສົງຄາມໃນອາດີດ. ໃນໄລຍະ 25 ປີທີ່ຜ່ານມາ. ພວກເຮົາໄດ້ສ້າງຄວາມປອດໄພ ໂດຍການກຳຈັດ ແລະ ທຳລາຍ ກັບດັກລະເບີດ, ລູກລະເບີດ ແລະ ອາວຸດ ນັບເປັນຈຳນວນຫຼວງຫຼາຍ.

# ປະກາດຮັບສະໝັກ ພະນັກງານ (ຄົນທ້ອງຖິ່ນແຂວງຄຳມ່ວນ)





ອົງການເກັບກູ້ລະເບີດ ແມັກ ໄດ້ເປີດໂອກາດທີ່ເທົ່າທຽມກັນ ໃຫ້ກັບຜູ້ສະໝັກທຸກຄົນທີ່ມີຄຸນວຸດທິເໝາະສົມໂດຍບໍ່ຈຳກັດ ເລື່ອງ: ເພດ, ສະພາບຮ່າງກາຍ, ຊົນເຜົ່າ, ສາດສະໜາ/ຄວາມເຊື່ອຖື




ອົງການເກັບກູ້ລະເບີດ ແມັກ ໄດ້ເຂົ້າມາເຮັດວຽກໃນ ສປປ ລາວ ຕັ້ງແຕ່ 1994 ໃນການແກ້ໄຂບັນຫາ ແລະ ໃຫ້ຄວາມຊ່ວຍເຫຼືອ ຕໍ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກລະເບີດທີ່ບໍ່ທັນແຕກ ເພື່ອໃຫ້ພວກເຂົາມີສະພາບແວດລ້ອມທີ່ປອດໄພໃນອານາຄົດ. ໂດຍມີເປົ້າໝາຍໃນການແບ່ງເບົາຜົນກະທົບຈາກລະເບີດທີ່ບໍ່ທັນແຕກ ທີ່ຍັງຄົງສ້າງຄວາມເສຍຫາຍຕໍ່ກັບການດຳລົງຊີວິດ, ສຸຂະພາບ, ການພັດທະນາເສດຖະກິດ - ສັງຄົມ ຂອງປະຊາຊົນ ແລະ ຊຸມຊົນ ທີ່ຢູ່ໃນແຂວງ ຊຽງຂວາງ ແລະ ແຂວງ ຄຳມ່ວນ.

## ພະນັກງານຂັບລົດປະຈຳຫ້ອງການ (ໂຊເຟີ)

## 1 ຕຳແໜ່ງ ປະຈຳຢູ່ ຫ້ອງການທ່າແຂກ, ເມືອງທ່າແຂກ, ແຂວງຄຳມ່ວນ

**ຈຸດປະສົງໜ້າວຽກ**:

ພະນັກງານຂັບລົດ ມີໜ້າທີ່ຮັບຜິດຊອບໃນການຂັບພາຫະນະຂອງອົງການເກັບກູ້ລະເບີດ ແມັກ, ໂດຍປະຕິບັດຕາມກົດຈາລະຈອນ ລວມເຖິງນະໂຍບາຍ ແລະ ຂັ້ນຕອນການປະຕິບັດຂອງອົງການເກັບກູ້ລະເບີດ ແມັກ.

ພະນັກງານຂັບລົດ ແມ່ນຢູ່ພາຍໃຕ້ການຄຸ້ມຄອງຂອງພະນັກງານຄຸ້ມຄອງພາຫະນະ ແລະ ຈະປະຕິບັດວຽກຕາມຕາຕະລາງການເຮັດວຽກ ທີ່ກຳນົດໂດຍອົງການເກັບກູ້ລະເບີດ ແມັກ ປະຈຳ ສປປ ລາວ. ໂດຍທົ່ວໄປແລ້ວ, ຕາຕະລາງການເຮັດວຽກ ແມ່ນເລີ່ມຕັ້ງແຕ່ວັນທີ 1-22 ແລະ ວັນພັກ 8 ມື້, ເຖິງຢ່າງໃດກໍຕາມ ຕາຕະລາງການເຮັດວຽກອາດມີການປ່ຽນແປງຕາມຄວາມຕ້ອງການຂອງໂຄງການ ແລະ ພະນັກງານຕ້ອງສາມາດເດີນທາງລະຫວ່າງແຂວງ ໃນ ສປປ ລາວ ຕາມຄວາມຈຳເປັນ.

**<u>ໜ້າທີຮັບຜິດຊອບ ດັ່ງລຸ່ມມນີ້:</u>**

- ຂັບພາຫະນະຂອງອົງການເກັບກູ້ລະເບີດ ແມັກ ຕາມທີ່ໄດ້ມອບໝາຍ ເພື່ອຮັບໃຊ້ວຽກງານບໍລິຫານ.
- ຮັກສາມາດຕະຖານສູງສຸດໃນການບໍລິການພະນັກງານພາຍໃນ ແລະ ແຂກຈາກພາຍນອກ.
- ປະຕິບັດຕາມ ແລະ ຮູ້ກ່ຽວກັບກົດລະບຽບພື້ນຖານໃນການນຳໃຊ້ຖະໜົນຢ່າງປອດໄພ ຂອງອົງການເກັບກູ້ລະເບີດ ແມັກ.
- ປະຕິບັດຕາມກົດໝາຍວ່າດ້ວຍ ການຈາລະຈອນທາງບົກ ແລະ ກົດຈາລະຈອນຂອງ ສປປ ລາວ.
- ຂັບຂີ່ດ້ວຍຄວາມຮັບຜິດຊອບ ແລະ ຄວາມປອດໄພ ໃນຂະນະທີ່ຂັບຂີ່ພາຫະນະຂອງອົງການເກັບກູ້ລະເບີດ ແມັກ.
- ຮັກສາຄວາມສະອາດ, ຄວາມເປັນລະບຽບຂອງພາຫະນະໃຫ້ຢູ່ໃນມາດຕະຖານສະເໝີ.
- ແຈ້ງພະນັກງານຄຸ້ມຄອງພາຫະນະທັນທີ ເມື່ອເກີດອຸບັດຕິເຫດ ແລະ ຄວາມເສຍຫາຍຕໍ່ພາຫະນະໃນມື້ເກີດເຫດ ແລະ ເຮັດບົດລາຍງານອຸບັດຕິເຫດສົ່ງໃຫ້ກັບພະນັກງານຄຸ້ມຄອງພາຫະນະ.
- ບັນທຶກບັນຫາຕ່າງໆຂອງພາຫະນະໃນແບບຟອມການບຳລຸງຮັກສາພາຫະນະ ແລະ ສົ່ງໃຫ້ກັບພະນັກງານຄຸ້ມຄອງພາຫະນະ.
- ນຳພາຫະນະທີ່ມອບໝາຍໄປສູນບໍລິການຕາມວັນທີກຳນົດທີ່ຕິດຢູ່ໜ້າແວ່ນ ແລະ ຊ່ວຍພະນັກງານຄຸ້ມຄອງພາຫະນະ ເອົາພາຫະນະເຂົ້າອູ່ສ້ອມແປງ ແລະ ເຕີມນ້ຳມັນ ເມື່ອຈຳເປັນ.
- ຫ້າມດື່ມສິ່ງມຶນເມົາ ຫຼື ຢູ່ໃນສະພາບທີ່ມຶນເມົາ ໃນຂະນະທີ່ປະຕິບັດໜ້າທີ່.

- ຕ້ອງສາມາດເດີນທາງໃນໄລຍະທາງທີ່ຍາວ ແລະ ດົນນານ ໄປຫ້ອງການສຳນັກງານໃຫຍ່ນະຄອນຫຼວງວຽງຈັນ ແລະ ຫ້ອງການແຂວງ ຊຽງຂວາງ ຂອງອົງການເກັບກູ້ລະເບີດ ແມັກ ແລະ ຕ້ອງສາມາດຕິດຕໍ່ໄດ້ຕະຫຼອດ ເມື່ອຈຳເປັນ. ລວມເຖິງ ໃນໄລຍະຂອງການປົດສະໜາມ.
- ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ ເພື່ອສະໜັບສະໜູນໂຄງການ ແລະ ຕຳແໜ່ງອື່ນໆ. ອາດລວມເຖິງການສະໜັບສະໜູນພະແນກອື່ນ ໃນການປະຕິບັດວຽກພື້ນຖານ.

**ເງື່ອນໄຂ, ຄຸນວຸດທິ ແລະ ປະສົບການມີດັ່ງນີ້:**

- ມີປະສົບການຢ່າງໜ້ອຍ 2 ປີ ໃນການຂັບຂີ່ ພ້ອມທັງມີສະຖິຕິການຂັບຂີ່ທີ່ດີ.
- ມີໃບຂັບຂີ່ທີ່ບໍ່ໝົດອາຍຸ ປະເພດ A, B ແລະ C.
- ມີປະສົບການໃນການບຳລຸງຮັກສາ ແລະ ການສ້ອມແປງພື້ນຖານ.
- ມີຄວາມຮູ້ ແລະ ຄຸ້ນເຄີຍກັບເສັ້ນທາງໃນນະຄອນຫຼວງວຽງຈັນ ແລະ ແຂວງອື່ນໆຈະພິຈາລະນາເປັນພິເສດ.
- ສາມາດສື່ສານພາສາລາວກັບຄົນອື່ນ, ມີຄວາມສາມາດໃນການສື່ສານເປັນພາສາອັງກິດຈະພິຈາລະນາເປັນພິເສດ.
- ມີປະສົບການໃນການຂັບຂີ່ພາຫະນະທີ່ມີລະບົບຂັບເຄື່ອນ 4 ລໍ້ (4WD)
- ມີຄວາມຮູ້ກ່ຽວກັບກົດຈາລະຈອນ.
- ມີທັກສະໃນການວາງແຜນ ແລະ ບໍລິຫານເວລາທີ່ດີ.
- ມີຄວາມສາມາດໃນການເຮັດວຽກເປັນສ່ວນໜຶ່ງຂອງທີມ.
- ມີຄວາມຊື່ສັດ ແລະ ຄຸນນະທຳສູງ.
- ເຄົາລົບນະໂຍບາຍ ແລະ ຂໍ້ກຳນົດພາຍໃນຕ່າງໆຂອງອົງການເກັບກູ້ລະເບີດ ແມັກ.
- ມີຄວາມສາມາດໃນການເຮັດວຽກເປັນທີມ.

**ເອກະສານທີ່ຕ້ອງການ:**

- ໃບຄຳຮ້ອງຂໍສະໝັກວຽກ **(ທົ່ວໄປ)**.
- ຊີວະປະຫວັດຫຍໍ້.
- ໃບຢັ້ງຢືນຮັບປະກັນຈາກນາຍບ້ານ.
- ສຳເນົາປຶ້ມສຳມະໂນຄົວ.
- ສຳເນົາໃບຢັ້ງຢືນການສຶກສາ.
- ສຳເນົາໃບຜ່ານງານ (ຖ້າມີ).
- **ສຳເນົາໃບຂັບຂີ່ ( ຕ້ອງຍັງມີອາຍຸການນຳໃຊ້ຢ່າງໜ້ອຍ 6 ເດືອນ)**

**ໝາຍເຫດ: ກະລຸນາຖືໃບຂັບຂີ່ຂອງແທ້ມາພ້ອມ ໃນມື້ມາສົ່ງເອກະສານ**

ອີງຕາມຄຳໝັ້ນສັນຍາຂອງອົງການເກັບກູ້ລະເບີດ ແມັກ ວ່າດ້ວຍນະໂຍບາຍດ້ານການປົກປ້ອງ, ການຄັດເລືອກຕຳແໜ່ງນີ້ແມ່ນຕ້ອງ ຜ່ານຂະບວນການກວດສອບປະຫວັດຄວາມເປັນມາ ເພື່ອຢັ້ງຢືນຄວາມຖືກຕ້ອງ ກ່ອນທີ່ຈະມີການສະເໜີການຈ້າງງານ, ອົງການເກັບ ກູ້ລະເບີດແມັກ ມຸ່ງໝັ້ນໃນຫຼັກການຂອງຄວາມຫຼາກຫຼາຍ, ສິດສະເໝີພາບ ແລະ ການມີສ່ວນຮ່ວມ ແລະ ເປີດໂອກາດໃນການຈ້າງ ງານແບບເທົ່າທຽມກັນ. ຖ້າທ່ານຄິດວ່າ ທ່ານມີຄຸນວຸດທິເໝາະສົມກັບບົດບາດຂອງຕຳແໜ່ງນີ້ ໃນອົງການຂອງພວກເຮົາ, ພວກເຮົາຍິນ ດີຕ້ອນຮັບການສະໝັກງານຂອງທ່ານ ໂດຍບໍ່ຄຳນຶງເຖິງພື້ນຖານຄວາມເປັນຢູ່ຂອງທ່ານ. ພວກເຮົາມຸ່ງໝັ້ນໃນການສະໜອງສະພາບ ແວດລ້ອມໃນການເຮັດວຽກແບບມີສ່ວນຮ່ວມ ແລະ ໃຫ້ສະໜັບສະໜູນ ເພື່ອໃຫ້ພະນັກງານທຸກຄົນຮູ້ສຶກໄດ້ຮັບຄວາມເຄົາລົບ ແລະ ໄດ້ຮັບການສະໜັບສະໜູນ ແລະ ໃນການ ບັນລຸຄວາມອາດສາມາດຂອງເຂົາເຈົ້າ.

ທຸກໆຮູບແບບຂອງການຈ້າງງານ ແລະ ຂະບວນການຄັດເລືອກພະນັກງານ, ບໍ່ວ່າຈະເປັນການຈ້າງງານພະນັກງານໃໝ່ຄັ້ງທຳອິດ ຫຼື ການເລື່ອນຕຳແໜ່ງພະນັກງານພາຍໃນອົງການ ຈະອີງໃສ່ຄຸນສົມບັດ, ຄຸນວຸດທິ, ຄວາມສາມາດ, ຜົນການປະຕິບັດວຽກງານ ແລະ ຄວາມຕ້ອງການຂອງອົງການ , ອົງການເກັບກູ້ລະເບີດ ແມັກ (ຫຼື ພາກສ່ວນອື່ນໆ ທີ່ກ່ຽວຂ້ອງກັບຂະບວນການຄັດ ເລືອກພະນັກງານ ຂອງອົງການເກັບກູ້ລະເບີດ ແມັກ) ຈະບໍ່ເກັບຄ່າທຳນຽມ (ຫຼື ຮັບເອົາຂອງຂວັນ ຫຼື ສິ່ງຕອບ ແທນອື່ນໆ) ໃນທຸກຂັ້ນຕອນຂອງຂະບວນການຄັດເລືອກພະນັກງານ (ການປະກາດຮັບ

ສະໜັກວຽກ, ການສໍາ ພາດ, ການປະເມີນຜົນ), ຖ້າທ່ານມີຂໍ້ຂ້ອງໃຈກ່ຽວກັບຂະບວນການນີ້ ທ່ານສາມາດລາຍງານ ໃຫ້ອົງການຂອງພວກເຮົາ ຜ່ານທາງ ອີເມວ safeguarding.la@maginternational.org

## ຂໍ້ກໍານົດ ແລະ ເງື່ອນໄຂ:

ອົງການເກັບກູ້ລະເບີດ ແມັກ ປະຈໍາ ສປປ ລາວ ມີສະພາບແວດລ້ອມຂອງການເຮັດວຽກທີ່ດີ, ສະຫວັດດີການທີ່ດີ ແລະ ມີນະໂຍບາຍໃນການສົ່ງເສີມຝຶກອົບຮົມເພື່ອຍົກລະດັບຄວາມຮູ້ຄວາມສາມາດໃຫ້ກັບພະນັກງານ.

**ຂັ້ນຕອນໃນການສະໝັກສໍາລັບຕໍາແໜ່ງນີ້:**

ຜູ້ທີ່ສົນໃຈກະລຸນາສົ່ງເອກະສານສະໝັກວຽກ ໂດຍມີການລະບຸໜ້າຊອງວ່າ ”ເອກະສານສໍາຄັນ” ໃຫ້ກັບພະແນກບຸກຄະລາກອນຂອງອົງການເກັບກູ້ລະເບີດແມັກທີ່ບ້ານ ສົມສະອາດ, ເມືອງທ່າແຂກ, ແຂວງຄໍາມ່ວນ ຫຼື ບ້ານ ຫຼັງຄັງ, ເມືອງ ບົວລະພາ, ແຂວງ ຄໍາມ່ວນ
ໂທ **051 212339**.

ປິດຮັບສະໝັກແມ່ນ ເວລາ **16:00 PM ຂອງ ວັນທີ 05 ເດືອນ ມິຖຸນາ 2025**

**ຜູ້ສະໝັກທີ່ໄດ້ຮັບການຄັດເລືອກເທົ່ານັ້ນ ແມ່ນຈະໄດ້ຮັບການຕິດຕໍ່ເພື່ອມາສໍາພາດ.**